ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ກະຊວງກະສິກຳແລະປ່າໄມ້

ກົມປູກຝັງ

ເລກທີ......2313......../ກປຝ

ນະຄອນຫຼວງວຽງຈັນ, ວັນທີ 08 NOV 2016

**ແຈ້ງການ**

**ຮຽນ:** ຫົວໜ້າ ຂະແໜງປູກຝັງແຂວງ, ນະຄອນຫຼວງ ແລະ ພາກສ່ວນກ່ຽວຂ້ອງ ໃນຂອບເຂດທົ່ວປະເທດ.

**ເລື່ອງ:** ການຂຶ້ນທະບຽນຜູ້ສົ່ງອອກ, ໂຮງເຮືອນຫຸ້ມຫໍ່ ແລະ ສວນປູກ ທີ່ຈະສົ່ງອອກ ພືດ ແລະ ຜະລິດຕະພັນພືດ ຈາກ ສປປ ລາວ ໄປຍັງ ຣາຊະອານາຈັກໄທ.

- ອີງຕາມ ຂໍ້ຕົກລົງຂອງລັດຖະມົນຕີ ວ່າດ້ວຍການຈັດຕັ້ງ ແລະ ເຄື່ອນໄຫວ ຂອງກົມປູກຝັງ ສະບັບເລກທີ 1889/ກປ, ລົງວັນທີ 09/08/2012.
- ອີງຕາມ ແຈ້ງການຂອງກົມວິຊາການກະເສດ, ສະບັບເລກທີ AC 0914/5664 ລົງວັນທີ 19 October B.E. 2559 (2016).

ກົມປູກຝັງ ຂໍຖືເປັນກຽດແຈ້ງມາຍັງ ຂະແໜງປູກຝັງແຂວງ, ນະຄອນຫຼວງ ແລະ ພາກສ່ວນກ່ຽວຂ້ອງ ໃນຂອບເຂດທົ່ວປະເທດ ຊາບວ່າ: ປັດຈຸບັນ, ການສົ່ງອອກ ພືດ ແລະ ຜະລິດຕະພັນພືດ ຈາກ ສປປ ລາວ ໄປຍັງ ຣາຊະອານາຈັກໄທ, ໂດຍສະເພາະ ແມ່ນ ພືດ ແລະ ຜະລິດຕະພັນພືດ ທີ່ໄດ້ກຳນົດຢູ່ໃນບັນຊີ ສິ່ງຕ້ອງຫ້າມ ຂອງຣາຊະອານາຈັກໄທ ຕ້ອງຂໍອະນຸຍາດນຳເຂົ້າ ໂດຍຜ່ານການວິໄຈຄວາມສ່ຽງສັດຕູພືດ ຈາກກົມວິຊາການກະເສດ, ປະເທດໄທ ຈຶ່ງສາມາດນຳເຂົ້າ ໄປຍັງ ປະເທດໄທໄດ້. ດັ່ງນັ້ນ, ເພື່ອອຳນວຍຄວາມສະດວກໃຫ້ແກ່ ການສົ່ງອອກ ພືດ ແລະ ຜະລິດຕະພັນພືດ ຂອງສປປ ລາວ ໄປຍັງ ຣາຊະອານາຈັກໄທ ໃຫ້ມີຄວາມສອດຄ່ອງ ກັບກົດໝາຍວ່າດ້ວຍການປ້ອງກັນພືດ ຂອງສປປ ລາວ ແລະ ລະບຽບການນຳເຂົ້າດ້ານສຸຂານາໄມພືດ ຂອງຣາຊະອານາຈັກໄທ, ລວມທັງສັນຍາ ແລະ ສົນທິສັນຍາ ສາກົນ ທີ່ ສອງປະເທດ ເປັນພາຄີ.

**ຫົວໜ້າກົມປູກຝັງ ອອກແຈ້ງການ:**

1. ໃຫ້ຂະແໜງປູກຝັງປະຈຳແຂວງ ແລະ ນະຄອນຫຼວງ ເປັນເຈົ້າການປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ປະຕິບັດຕາມຂັ້ນຕອນ ດັ່ງລຸ່ມນີ້:

   1.1. ການສົ່ງອອກ ພືດ ແລະ ຜະລິດຕະພັນພືດ ທີ່ກຳນົດຢູ່ໃນບັນຊີສິ່ງຕ້ອງຫ້າມ ຂອງຣາຊະອານາຈັກໄທ ຕ້ອງຈົດທະບຽນຜູ້ສົ່ງອອກ, ໂຮງເຮືອນຫຸ້ມຫໍ່-ບັນຈຸຕາມມາດຕະຖານການຈັດການທີ່ດີ (ຫຼື Good

Manufacturing Practice (GMP) ແລະ ສວນປູກ ນໍາຂະແໜງປູກຝັງປະຈໍາແຂວງ ແລະ ນະຄອນຫຼວງວຽງຈັນ ໂດຍມີການຢັ້ງຢືນ ຈາກຫ້ອງການກະສິກໍາ ແລະ ປ່າໄມ້ເມືອງທີ່ກ່ຽວຂ້ອງ (ມີເອກະສານຄັດມາພ້ອມນີ້);

1.2. ກົມປູກຝັງ ຮັບຮູ້ ໂຮງເຮືອນຫຸ້ມຫໍ່-ບັນຈຸຕາມມາດຕະຖານການຈັດການທີ່ດີ (GMP) ທີ່ໄດ້ຜ່ານການຮັບຮອງ ແລະ ຢັ້ງຢືນ ຈາກອົງການປ້ອງກັນພືດແຫ່ງຊາດໄທ;

1.3. ຂັ້ນຕອນການອອກໃບຢັ້ງຢືນສຸຂານາໄມພືດ (Phytosanitary Certificate), ບໍລິສັດ ຫຼື ຜູ້ສົ່ງອອກ ຕ້ອງສໍາເນົາເອກະສານປະກອບ ຄັດຕິດໄປພ້ອມກັບຊຸດເອກະສານຂໍໃບຢັ້ງຢືນສຸຂານາໄມພືດ ຄື: ໃບທະບຽນຜູ້ສົ່ງອອກ, ໃບທະບຽນໂຮງເຮືອນຫຸ້ມຫໍ່ ແລະ ໃບທະບຽນສວນປູກ ;

1.4. ສ່ວນເລກລະຫັດຂອງໃບທະບຽນຜູ້ສົ່ງອອກ ແລະ ສວນປູກ ແມ່ນ ຂະແໜງປູກຝັງແຂວງ ເປັນຜູ້ກໍານົດຕາມລະຫັດ ທີ່ກົມພາສີ, ກະຊວງການເງິນ ດໍາລັດ 258/ນຍ ລົງວັນທີ 28/08/2009;

1.5. ລະຫັດສວນປູກ ແມ່ນໃຫ້ນໍາໃຊ້ເລກລະຫັດ ແຂວງ, ເມືອງ, ບ້ານ ຕາມລະຫັດ ທີ່ ສູນສະຖິຕິແຫ່ງຊາດ, ກະຊວງແຜນການ ແລະ ການລົງທຶນກໍານົດໃຫ້;

1.6. ຄ່າທໍານຽມ ແລະ ຄ່າບໍລິການ:

- ໃບຄໍາຮ້ອງ ແລະ ຄ່າທໍານຽມ ຂໍຂຶ້ນທະບຽນ (ຜູ້ສົ່ງອອກ, ໂຮງເຮືອນຫຸ້ມຫໍ່-ບັນຈຸ ແລະ ສວນປູກ) ຈາກຫ້ອງການກະສິກໍາ ແລະ ປ່າໄມ້ເມືອງ ຊຸດລະ 10,000 ກີບຕໍ່ຊຸດ;
- ໃບທະບຽນ ແລະ ຄ່າທໍານຽມ (ຜູ້ສົ່ງອອກ, ໂຮງເຮືອນຫຸ້ມຫໍ່-ບັນຈຸ ແລະ ສວນປູກ) ຈາກຂະແໜງປູກຝັງແຂວງ, ນະຄອນຫຼວງວຽງຈັນ ຊຸດລະ 100,000 ກີບຕໍ່ຊຸດ;

ສ່ວນຄ່າບໍລິການວິຊາການອື່ນ ເປັນຕົ້ນ ການລົງສໍາຫຼວດ, ການກວດກາ ແລະ ຢັ້ງຢືນສຸຂານາໄມພືດ ໃຫ້ປະຕິບັດຕາມລັດຖະບັນຍັດຂອງປະທານປະເທດ ເລກທີ 003/ນຍ ລົງວັນ 26/12/2012;

2. ປຶ້ມແນະນໍາການຈັດຕັ້ງປະຕິບັດ ກ່ຽວກັບ ການຂຶ້ນທະບຽນ ໄດ້ຄັດຕິດມາພ້ອມນີ້;

3. ແຈ້ງການສະບັບນີ້ ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານເພື່ອຊາບ ແລະ ພ້ອມກັນຈັດຕັ້ງປະຕິບັດ ໃຫ້ໄດ້ຮັບຜົນດີ.

ຫົວໜ້າກົມປູກຝັງ

ກົມປູກຝັງ

ວິໄລສຸກ ເດບນະວົງ

ບ່ອນສົ່ງ:

- ຄະນະກົມປູກຝັງ 01 ສະບັບ (ເພື່ອຮັບຊາບ ແລະ ຊີ້ນໍາ)
- ຂະແໜງປູກຝັງແຂວງ, ນະຄອນຫຼວງ 01 ສະບັບ (ເພື່ອຈັດຕັ້ງປະຕິບັດ)
- ເກັບມ້ຽນ 01 ສະບັບ